ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ່......0075......../ກປ.2005

ນະຄອນຫລວງວຽງຈັນ, ວັນທີ 02 FEB 2005

# ຄຳສັ່ງ

## ຂອງລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້
## ວ່າດ້ວຍການເພີ່ມທະວີ ການປ້ອງກັນ ແລະ ສະກັດກັ້ນ ພະຍາດໄຂ້ຫວັດສັດປີກ

ເຖິງ: ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ.

- ອີງໃສ່ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 85/ນຍ, ລົງວັນທີ 31/05/1993 ວ່າດ້ວຍການຄຸ້ມຄອງສັດລ້ຽງ ໃນ ສປປ ລາວ.
- ອີງໃສ່ ຄຳສັ່ງແນະນຳ ຂອງນາຍົກ ລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 27/1/2004 ກ່ຽວກັບການຄວບຄຸມ ພະຍາດໄຂ້ຫວັດສັດປີກ.

ໃນຕົ້ນເດືອນ ມັງກອນ 2004 ຜ່ານມານີ້ ພະຍາດໄຂ້ຫວັດສັດປີກ ໄດ້ລະບາດຂຶ້ນ ຢູ່ໃນ ສປປ ລາວ ພວກເຮົາ ຊຶ່ງມີ 46 ຟາມ ກວມເອົາ 3 ແຂວງ ຄື: ນະຄອນຫລວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ ໄດ້ຮັບຜົນກະທົບ ຊຶ່ງໄດ້ຂ້າຝູງສັດປີກພວກເຮົາ ຫລາຍກວ່າ 155.000 ໂຕ, ເຮັດໃຫ້ມີຜົນກະທົບ ທາງດ້ານເສດຖະກິດໂດຍກົງ ຕໍ່ເສດຖະກິດລວມຂອງຊາດ ແລະ ຄອບຄົວຂອງຜູ້ລ້ຽງສັດ, ແຕ່ຍ້ອນຄວາມເອົາໃຈໃສ່ ຂອງພັກ ແລະ ລັດຖະບານ, ຂອງອຳນາດການປົກຄອງ ແຕ່ລະຂັ້ນ ບວກກັບ ຄວາມຕື່ນຕົວຮ່ວມມື ຈາກຊາວກະສິກອນ ຜູ້ລ້ຽງສັດ, ຍ້ອນການອູ້ມຊູ ຊ່ວຍເຫລືອ ຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນອື່ນໆ ສົມທົບກັບ ຄວາມຮັບຜິດຊອບ ຢ່າງເອົາການເອົາງານ ຈາກຄະນະສະເພາະກິດຄວບຄຸມພະຍາດໄຂ້ຫວັດສັດປີກ ນັບແຕ່ ຂັ້ນສູນກາງ ລົງຮອດທ້ອງຖິ່ນ, ພວກເຮົາ ຈຶ່ງສາມາດດັບມອດພະຍາດດັ່ງກ່າວໄດ້ ແລະ ສຳເລັດລົງ ໃນວັນທີ 04 ມີນາ 2004.

ນັບແຕ່ ມື້ນັ້ນເປັນຕົ້ນມາ ຈົນເຖິງ ປັດຈຸບັນ ປະກົດການ ຂອງພະຍາດດັ່ງກ່າວ ກໍບໍ່ທັນ ໄດ້ສະແດງອອກ ຢູ່ໃນ ສປປ ລາວ, ແຕ່ເຖິງຢ່າງໃດກໍຕາມ, ຢູ່ໃນ ບາງປະເທດໃກ້ຄຽງພວກເຮົາ, ພະຍາດໄຂ້ຫວັດສັດປີກ ຍັງກັບຄືນມາລະບາດອີກ ບໍ່ສະເພາະແຕ່ ແຜ່ລະບາດ ຈາກສັດຫາສັດເທົ່ານັ້ນ ຍັງແຜ່ລະບາດຈາກສັດຫາຄົນອີກດ້ວຍ. ເພາະສະນັ້ນ, ພວກເຮົາ ຈຶ່ງມີຄວາມຈຳເປັນ ຕອ້ງມີມາດຕະການປອ້ງກັນ ແລະ ສະກັດກັ້ນ ເພື່ອບໍ່ໃຫ້ພະຍາດດັ່ງກ່າວ ສາມາດເກີດຂຶ້ນໄດ້ ແລະ ແຜ່ລາມ ໃນ ສປປ ລາວ ໃນຮອບໃໝ່.

ລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ ອອກຄຳສັ່ງດັ່ງນີ້:

1. ໃຫ້ສືບຕໍ່ ຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ຂອງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 27/01/2004 ວ່າດ້ວຍການຄວບຄຸມ ພະຍາດໄຂ້ຫວັດສັດປີກ ໂດຍສະເພາະ ແມ່ນຂໍ້ທີ 1-6.

2. ໃຫ້ຄະນະສະເພາະກິດ ທີ່ມີຢູ່ແລ້ວ ນັບທັງ ຂັ້ນສູນກາງ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ຂັ້ນທ້ອງຖິ່ນ ສືບຕໍ່ລົງເຄື່ອນໄຫວ ກວດກາ, ເຝົ້າລະວັງ, ປ້ອງກັນ ແລະ ສະກັດກັ້ນ ພະຍາດໄຂ້ຫວັດສັດປີກ ຢ່າງເຂັ້ງຄັດ ໂດຍສະເພາະ ຢູ່ບັນດາ ແຂວງ ທີ່ເຄີຍເກີດພະຍາດດັ່ງກ່າວ ໃນຮອບໜຶ່ງຜ່ານມາແລ້ວ ເຊັ່ນ: ນະຄອນຫລວງວຽງຈັນ, ແຂວງສະ ຫວັນນະເຂດ ແລະ ແຂວງຈຳປາສັກ.

3. ສຳລັບແຂວງ ທີ່ມີຊາຍແດນ ຕິດຈອດ ກັບປະເທດໃກ້ຄຽງ ໃຫ້ສືບຕໍ່ ປະສານ ກັບທຸກພາກສ່ວນກ່ຽວຂ້ອງ ກວດກາ ເກືອດຫ້າມ ການນຳເຂົ້າ ສັດປີກ ແລະ ຜະລິດຕະພັນສັດປີກ ທຸກຊະນິດ ຕາມດ່ານຕ່າງໆ ຫລື ຕາມຊາຍແດນ ຖ້າຫາກ ພົບເຫັນ ການນຳເຂົ້າ ຫລື ລັກລອບ ນຳເຂົ້າ ສັດປີກ ແລະ ຜະລິດຕະພັນສັດປີກ ຈາກຕ່າງປະເທດ ໃຫ້ກວດຍຶດ ແລະ ນຳໄປທຳລາຍຖິ້ມ ດ້ວຍການເຜົາ ຫລື ຝັງ, ສ່ວນຜູ້ທີ່ລະເມີດ ຄຳສັ່ງສະບັບນີ້ ໃຫ້ກ່າວເຕືອນ, ປັບໃໝ ຫລື ດຳເນີນຄະດີ ຢ່າງເຂັ້ມງວດ.

4. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ສົມທົບກັບ ພາກສ່ວນກ່ຽວຂ້ອງ ຂັ້ນທ້ອງຖິ່ນ ຈັດຕັ້ງໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມື ຕໍ່ກັບມາດຕະການປ້ອງກັນ ແລະ ສະກັດກັ້ນ ພະຍາດໄຂ້ຫວັດສັດປີກ ທີ່ທາງການວາງອອກ.

5. ແນະນຳ ໃຫ້ປະຊາຊົນ ບັນດາເຜົ່າ ເອົາໃຈໃສ່ ຕິດຕາມ ສຸກຂະພາບສັດປີກ ຂອງຕົນ ຢ່າງໃກ້ສິດ. ໃນກໍລະນີ ພົບເຫັນ ສັດປີກ ເຈັບ ຫລື ຕາຍ ຢູ່ໃນຄອກ ຫລື ຟາມ ຂອງຕົນ ຫ້າມນຳເອົາສັດປີກ ແລະ ສິ້ນສ່ວນຕ່າງໆ ໄປປຸງແຕ່ງ ເປັນອາຫານ ຫລື ຈຳໜ່າຍ ຊື້ຂາຍເດັດຂາດ. ໃຫ້ເຈົ້າຂອງສັດ ຮີບຮ້ອນລາຍງານ ຕໍ່ສັດຕະວະແພດບ້ານ ຫລື ນາຍບ້ານ ໂດຍດ່ວນ ເພື່ອແຈ້ງໃຫ້ ຫ້ອງການ ກະສິກຳ ປ່າໄມ້ເມືອງ ແລະ ແຂວງ ແລ້ວແຈ້ງຕໍ່ ໄປຍັງກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອວາງມາດຕະການ ຄວບຄຸມ ຢ່າງທັນການ.

6. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ ປະສານສົມທົບກັບ ໜ່ວຍງານທີ່ກ່ຽວຂ້ອງ ຂອງພະແນກສາທາລະນະສຸກແຂວງ, ເພື່ອພ້ອມກັນເຝົ້າລະວັງ, ກວດກາ, ຕິດຕາມ ຕາມສະຖານທີ່ຕ່າງໆ ທີ່ເຫັນວ່າມີຄວາມສ່ຽງຕໍ່ການລະບາດ, ໃຫ້ມີການແລກປ່ຽນຂ່າວສານຂໍ້ມູນ ພ້ອມ